California
Deaf-Blind
Services
ໜ່ວຍບໍຣິການ
ຜູ້ພິການທັງຫູແລະຕາ
ແຫ່ງຣັຖຄາລີຟໍນີ

ພາຍໃນຣັຖຄາລີຟໍນີ (800) 822-7884

# ຄຳແຈ້ງຂໍ້ມູນຕ່າງ ໆ

# ກົນລະຍຸດຕ່າງ ໆ ເພື່ອໄດ້ຮັບຜົນສຳເຣັດ ໃນການເຂົ້າພົບທ່ານໝໍສຳຫຣັບບຸກຄົນ ທີ່ພິການທັງຫູແລະຕາ

ຜູ້ທີ່ພິການທັງຫູແລະຕາອາດຕ້ອງການການປິ່ນປົວຮັກສາພະຍາບານຫລາຍຢ່າງ ເຊິ່ງອາດທຳໃຫ້ຈຳເປັນຕ້ອງເຂົ້າພົບທ່ານໝໍບ່ອຍ ໆ. ການເຂົ້າພົບທ່ານໝໍດັ່ງກ່າວອາດເປັນເຫດການທີ່ນ່າກົວຢ້ານສຳຫຣັບຜູ້ທີ່ໄດ້ຮັບການປິ່ນປົວ ໃນກໍຣະນີທີ່ບໍ່ເຂົ້າໃຈກະບວນການຫຣືທີ່ບໍ່ໄດ້ຄາດໝາຍກະບວນການນັ້ນໄວ້ລ່ວງໜ້າ. ໃນຂະນະຜູ້ທີ່ພິການທັງຫູແລະຕາເກີດກົວຢ້ານ, ເຂົາອາດສະແດງຄວາມວິຕົກກັງວົນດ້ວຍການໃຊ້ອາຣົມຢ່າງຮ້າຍແຮງ, ຄວາມປະພຶດກ້າວຮ້າວ ແລະ/ຫຣືການແຂງຕົວ ເຊິ່ງທຳໃຫ້ການກວດໂຣຄເປັນໄປດ້ວຍຄວາມຍາກລຳບາກ. ການເຂົ້າພົບທ່ານໝໍດັ່ງກ່າວອາດທຳໃຫ້ຄອບຄົວແລະທ່ານໝໍເກີດຜິດຫວັງເປັນອັນມາກ ໃນຂະນະທີ່ເຂົາເຈົ້າພະຍາຍາມອະທິບາຍແລະຄວບຄຸມປະພຶດທີ່ສະແດງອອກ.

ຂໍ້ຕໍ່ໄປແມ່ນຫລັກເກນທົ່ວໄປທີ່ຈະໃຫ້ການເຂົ້າພົບໝໍໄດ້ເປັນໄປໂດຍດີແລະໄດ້ຮັບຜົນສຳເຣັດ. ເຮົາຂໍແນະນຳໃຫ້ຄອບຄົວແລະຜູ້ປິ່ນປົວຮັກສາທົບທວນຫລັກເກນດັ່ງກ່າວກັບທ່ານໝໍເມື່ອທຳນັດຫຣືມາເຖິງຫ້ອງການຂອງທ່ານໝໍ. ທ່ານອາດຝາກສຳເນົາຂອງຄຳແຈ້ງຂໍ້ມູນຕ່າງ ໆ ສະບັບນີ້ໄວ້ກັບພະນັກງານຂອງໝໍໄດ້ ເພື່ອໃຫ້ເພິ່ນຮູ້ຈັກກັບຄວາມຕ້ອງການຂອງຄົນໄຂ້ທີ່ພິການທັງຫູແລະຕາ.

1. ຄວນພະຍາຍາມຊອກຫາທ່ານໝໍທີ່ມີປະສົບການກັບບຸກຄົນທີ່ພິການທັງຫູແລະຕາ. ຫາກທ່ານຕ້ອງຄວາມຊ່ວຍແນະນຳທ່ານໝໍທີ່ເໝາະສົມ, ໃຫ້ໂທໄປຍັງ California Deaf-Blind Services (ໜ່ວຍບໍຣິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລີຟໍນີ) ທີ່ໝາຍເລກ 1-800-822-7884 ເພື່ອໄດ້ຮັບລາຍລະອຽດຈາກຖານຂໍ້ມູນຂອງເຮົາກ່ຽວກັບການແນະນຳໝໍ.

2. ໂທໄປຫາພະນັກງານຂອງທ່ານໝໍກ່ອນທີ່ຈະເຂົ້າພົບໝໍ ເພື່ອໃຫ້ເພິ່ນຊາບລ່ວງໜ້າເຖິງສິ່ງທີ່ຄວນຄາດໝາຍ (ເຊັ່ນ ຄວາມຍາກລຳບາກ, ການຮໍຖ້າ, ການຮ້ອງສຽງດັງ, ຄວາມປະພຶດ, ການທ້າທາຍ ຯລຯ).

ຄຳແຈ້ງຂໍ້ມູນຈາກ California Deaf-Blind Services (ໜ່ວຍບໍຣິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລີຟໍນີ ຫຣື CDBS) ເຫລົ່ານີ້ ຈັດທຳເພື່ອທີ່ຈະນຳໄປໃຊ້ປະໂຍດໄດ້ທັງໂດຍຄອບຄົວແລະໂດຍຜູ້ປະກອບອາຊີບທີ່ຮັບໃຊ້ບໍຣິການຜູ້ທີ່ພິການທັງຫູທັງຕາ. ຂໍ້ມູນດັ່ງກ່າວໃຊ້ໄດ້ກັບນັກສຶກສາຕັ້ງແຕ່ເກີດມາຈົນເຖິງໄດ້ຄົບອາຍຸ 22 ປີບໍຣິບູນ. ວັດຖຸປະສົງຂອງຄຳແຈ້ງຂໍ້ມູນແຕ່ລະສະບັບ ແມ່ນໃຫ້ຄວາມຮູ້ໂດຍທົ່ວໄປໃນເຣື່ອງໃດເຣື່ອງນຶ່ງຢ່າງເຈາະຈົງ. ນັກສຶກສາແຕ່ລະທ່ານ ສາມາດຂໍທາບລາຍລະອຽດເພີ່ມເຕີມໄດ້ໂດຍຜ່ານການຊ່ວຍເຫລືອທາງວິທຍາການສະເພາະລາຍທີ່ໃຫ້ໂດຍ CDBS. ຄຳແຈ້ງຂໍ້ມູນນີ້ ຈຶ່ງນັບເປັນຈຸດເຣີ່ມຕົ້ນສຳຫຣັບການໄດ້ຮັບຊາບລາຍລະອຽດຕໍ່ໄປ.

3. ຄວນນຳເອົາສິ່ງໃດສິ່ງນຶ່ງມາໃຫ້ຄົນໄຂ້ທຳໃນຣະຫວ່າງການຣໍຖ້າທີ່ຫ້ອງການຂອງໝໍ.

4. ຄວນນຳເອົາເອກະສານບັນທຶກປະວັດທາງແພດຂອງຄົນໄຂ້ມາພ້ອມ ເພື່ອຫລີກລ່ຽງບໍ່ໃຫ້ລາຍງານປະວັດຊ້ຳກັນຫລາຍເທື່ອ, ຣໍຖ້າໃນຣະຫວ່າງການສົ່ງເອກະສານບັນທຶກມາເຖິງ ແລະການທຳການກວດໂຣຄຊ້ຳກັນໂດຍບໍ່ຈຳເປັນ. ຄວນຣະບຸຊື່ແລະ ນ້ຳເບີໂທຣະສັບຂອງໝໍທີ່ເຄີຍໃຫ້ການຮັກສາພະຍາບານມາກ່ອນທຸກ ໆ ທ່ານ.

5. ຄວນນຳເອົາຂໍ້ມູນຕ່າງ ໆ ມາທີ່ກ່ຽວຂ້ອງກັບບັນຫາທາງສຸຂະພາບຢ່າງເຈາະຈົງຂອງຄົນໄຂ້ຜູ້ນັ້ນ ໃນກໍຣະນີທີ່ຜູ້ໃຫ້ການຮັກສາ ພະຍາບານເປັນຄົນໃໝ່ຫຣືບໍ່ຄຸ້ນເຄີຍກັບອາການທີ່ເກີດຂຶ້ນພ້ອມກັນຫຣືສະພາວະຂອງຄົນໄຂ້ໂດຍສະເພາະ ຯລຯ (ເຊັ່ນ Congenital Rubella Syndrome ຫຣື CHARGE Association ເປັນຕົ້ນ).

6. ແນະນຳໃຫ້ຜູ້ທີ່ພິການທັງຫູແລະຕາຮູ້ຈັກຜູ້ທີ່ຈະໃຫ້ການຮັກສາມພະຍາບານທຸກ ໆ ຄົນກ່ອນໃຫ້ໝໍເຂົ້າມາແຕະຕ້ອງຄົນໄຂ້. ອັນນີ້ ທຳໄດ້ໂດຍທຳສັນຍານແທນຊື່, ໂດຍໃຊ້ສິ່ງຂອງ ຫຣືການດົມກິ່ນທີ່ເປັນເອກະລັກ.

7. ຄວນທຳໃຫ້ມືແລະເຄື່ອງອຸປະກອນຕ່າງ ໆ ອຸ່ນເສັຽກ່ອນ ໆ ທີ່ຈະເຂົ້າມາແຕະຕ້ອງຄົນໄຂ້ທີ່ພິການທັງຫູແລະຕາ.

8. ອະທິບາຍໃຫ້ຄົນໄຂ້ເຂົ້າໃຈກະບວນການແຕ່ລະຂັ້ນຕອນກ່ອນທີ່ຈະປະຕິບັດການຕາມແຕ່ລະຂັ້ນຕອນນັ້ນ. ອັນນີ້ ສາມາດທຳ ໄດ້ໂດຍໃຫ້ຄົນໄຂ້ກວດເບິ່ງເຄື່ອງອຸປະກອນຕ່າງ ໆ ດ້ວຍການສັມຜັດ. ຕໍ່ຈາກນັ້ນ ທ່ານອາດແຕະຕ້ອງສ່ວນຂອງຮ່າງກາຍທີ່ ກຳລັງຈະກວດໂດຍໃຊ້ເຄື່ອງອຸປະກອນນັ້ນ. ຄວນຣໍຖ້າຈັກບຶດນຶ່ງ ເພື່ອໃຫ້ຄົນໄຂ້ຕຽມຕົວກ່ອນຈະເຣີ່ມທຳການກວດ. ທ່ານ ກໍຍັງອາດໃຫ້ທ່ານໝໍສະແດງກະບວນການໃຫ້ຄົນໄຂ້ເຂົ້າໃຈ ໂດຍໃຊ້ສະມາຊິກຄອບຄົວຫຣືຜູ້ຮັກສາພະຍາບານ ເພື່ອຈະເປັນ ເຄື່ອງຈຳລອງຂອງການຕອບສນອງທີ່ຕ້ອງການ.

9. ໃຫ້ຄົນໄຂ້ຊາບເຖິງການກ້າວໜ້າຂອງການກວດນັ້ນ. ບອກໃຫ້ຄົນໄຂ້ຊາບລ່ວງໜ້າເຖິງສິ່ງທີ່ຈະເກີດຂຶ້ນໃນຣະຍະຕໍ່ໄປ ຮວມ ທັງວັຕຖຸປະສົງໃນການກວດແຕ່ລະຂັ້ນຕອນ.

10. ຄວນຕັ້ງຕົວຢ່າງ ແລະໃຫ້ຣາງວັນກັບຄວາມປະພຶດຕ່າງ ໆ ເຊັ່ນ ການໃຫ້ຄວາມຮ່ວມມືງ ການຣໍຖ້າທີ່ເໝາະສົມ, ຄວາມໄວ້ ວາງໃຈ, ການຍອມຮັບ ແລະການປ່ອຍຕົວ.

11. ຄວນໃຫ້ຄວາມຮູ້ເບື້ອງຫລັງແກ່ຜູ້ປະກອບອາຊີບທາງດ້ານການແພດທັງຫລາຍ (ເຊັ່ນ ທ່ານໝໍ, ນາງໝໍ, ພະນັກງານຕ້ອນ ຮັບຄົນໄຂ້, ຜູ້ຊ່ຽວຊານທາງສຸຂະພາບ ເປັນຕົ້ນ) ກ່ຽວກັບການປະຕິບັດຢ່າງຊຶ່ງກັນແລະກັນທີ່ໄດ້ເກີດຂຶ້ນຣະຫວ່າງເຂົາເຈົ້າ ແລະຜູ້ທີ່ພິການທັງຫູແລະຕາ ຫຣືຄອບຄົວ ຫຣືຜູ້ທີ່ໃຫ້ການຮັກສາພະຍາບານ (ເຊັ່ນ ຄຳສັບທີ່ໃຊ້, ມັນຣະຍາດທີ່ໃຊ້ຂ້າງ ຕຽງນອນຂອງຄົນໄຂ້, ນ້ຳສຽງທີ່ສະແດງອາຣົມ ຫຣື ຄວາມເຕັມໃຈທີ່ຈະຮ່ວມມືກັບທ່ານ ເປັນຕົ້ນ). ຄວາມຮູ້ທີ່ໃຫ້ນັ້ນ ຈະເປັນປະໂຍດອັນລ້ຳຄ່າແກ່ທ່ານໝໍທີ່ຕ້ອງການໄດ້ຮັບຜົນສຳເຣັດໃນໂອກາດຕໍ່ໄປທີ່ຈະຕ້ອງປະຕິບັດຢ່າງຊຶ່ງກັນແລະກັນກັບຜູ້ ທີ່ພິການທັງຫູແລະຕາ.